ສຶກສາ - ກິລາ

unicef
ເພື່ອເດັກທຸກໆຄົນ

GLOBAL PARTNERSHIP for EDUCATION

# ທຶນຊ່ວຍເຫຼືອລ້າ ເພື່ອຕ້ານພະຍາດໂຄວິດ19 ສະໜັບສະໜູນໂດຍ ກອງທຶນຮ່ວມມືສາກົນເພື່ອການສຶກສາ (GPE)



# ຈຸດປະສົງຂອງໂຄງການ (PROJECT OBJECTIVES)

ເພື່ອຮັກສາ ແລະ ສົ່ງເສີມ**ການຮຽນຮູ້**ຂອງເດັກແລະນັກຮຽນໃຫ້ມີຄວາມຕໍ່ເນື່ອງ ໃນຂະນະດຽວກັນ ກໍຮັບປະກັນ **ສຸຂະພາບ** ແລະ **ຄວາມປອດໄພ**ຂອງເຂົາເຈົ້າ ໂດຍສະໜັບສະໜູນມາດຕະການປ້ອງກັນ ແລະ ຄວບຄຸມການແຜ່ລະບາດຂອງພະຍາດໂຄວິດ-19

To keep and enhance Lao children's and young people's **learning**, while safeguarding their **health and safety** by supporting measures to prevent and control the spread of COVID-19

*ຈຸດປະສົງສະເພາະ (ອີງຕາມແຜນຕອບໂຕ້ພະຍາດໂຄວິດ19 ຂອງຂະແໜງສຶກສາ ຂອງ ສປປລາວ*

*Specific objectives (as per the Lao PDR Education COVID-19 Response Plan)*

1. ສະໜັບສະໜູນນັກຮຽນ, ຜູ້ທີ່ເຮັດວຽກໃນຂະແໜງສຶກສາ, ຜູ້ເບິ່ງແຍງເດັກ / ພໍ່ແມ່ຜູ້ປົກຄອງ ແລະ ຊຸມຊົນໃນໂຮງຮຽນ ເພື່ອປ້ອງກັນການແຜ່ລະບາດຂອງ ພະຍາດໂຄວິດ-19 ໃຫ້ສອດຄ່ອງກັບ ຄູ່ມືແນະນຳດ້ານສາທາລະນະສຸກແຫ່ງຊາດ ແລະ ຮັບປະກັນສະຫວັດດີພາບຂອງນັກຮຽນ ແລະ ພະນັກງານໃນຂະແໜງສຶກສາ ແລະ ກິລາ. Support learners, educators, caregivers/parents and school communities to prevent the transmission and spread of Covid-19 in line with national public health guidance, and ensure the well-being of learners and education staff.

# ຈຸດປະສົງຂອງໂຄງການ (PROJECT OBJECTIVES)

- 2. ຮັບປະກັນການຮຽນຮູ້ຢ່າງຕໍ່ເນື່ອງ ໂດຍຜ່ານການຈັດຕັ້ງປະຕິບັດກິດຈະກໍາ / ໂອກາດຂອງການຮຽນຮູ້ຕົ້ນຕໍ/ຫຼາກຫຼາຍ ເພື່ອແນໃສ່ການຮຽນຮູ້ທີ່ມີຄຸນນະພາບ ແລະ ສະຫວັດດີພາບຂອງນັກຮຽນ, ຄູອາຈານ, ຜູ້ເບິ່ງແຍງເດັກ / ພໍ່ແມ່ຜູ້ປົກຄອງ ແລະ ຊຸມຊົນໃນໂຮງຮຽນ ໂດຍຄໍານຶງເຖິງຄວາມເປັນທໍາ ແລະ ການມີສ່ວນຮ່ວມ

Ensure continuity of learning through the implementation of diverse/key learning activities/opportunities aimed at quality learning and wellbeing of learners, teachers, caregivers/parents, and school communities taking into account equity and inclusivity.

# ຈຸດປະສົງຂອງໂຄງການ (PROJECT OBJECTIVES)

3. ສະໜັບສະໜູນ ການກັບຄືນສູ່ການຮຽນໃນໂຮງຮຽນ / ສະຖາບັນການສຶກສາທີ່ປອດໄພ ສໍາລັບຜູ້ຮຽນ, ຄູອາຈານ, ຜູ້ເບິ່ງແຍງເດັກ / ພໍ່ແມ່ຜູ້ປົກຄອງ ແລະ ຊຸມຊົນໃນໂຮງຮຽນ. Support the safe and inclusive return to school/educational institutions for learners, teachers, caregivers/parents, and school communities.

4. ຮັບປະກັນໃຫ້ມີການປະສານງານລະຫວ່າງລັດຖະບານ, ຄູ່ຮ່ວມພັດທະນາ ແລະ ຂະ ແໜງການອື່ນທີ່ກ່ຽວຂ້ອງ ກ່ຽວກັບມາດຕະການການປ້ອງກັນ ແລະ ຄວບຄຸມ ພະຍາດໂຄວິດ-19 ຂອງຂະແໜງສຶກສາ ແລະ ກິລາ. Ensure a coordinated Government and Development Partners response to COVID-19 prevention and control measures for the education sector, in coordination with other sectors.

# ຂົງເຂດຜົນໄດ້ຮັບໄລຍະຍາວ (OUTCOME AREAS)

I. ການປ້ອງກັນ ແລະ ການຄວບຄຸມພະຍາດໂຄວິດ-19 (PREVENTION & CONTROL OF COVID-19 in schools)

**II. ສືບຕໍ່ການຮຽນຮູ້:** ນັກຮຽນຢູ່ເຂດທີ່ຫ່າງໄກສອກຫຼີກ, ດ້ອຍໂອກາດ ແລະ ມີຄວາມສ່ຽງສູງຕໍ່ກັບພະຍາດໂຄວິດ-19 ສາມາດເຂົ້າເຖິງໂອກາດໃນການຮຽນຮູ້ທີ່ຫຼາກຫຼາຍ, ຄູ-ອາຈານ ແລະ ພໍ່ແມ່ຜູ້ປົກຄອງ / ຜູ້ເບິ່ງແຍງເດັກ ມີຄວາມສາມາດໃນການສະໜັບສະໜູນ ການຮຽນຮູ້ທາງໄກໂດຍຄຳນຶງເຖິງຄວາມທ່ຽງທຳ ແລະ ການມີສ່ວນຮ່ວມຂອງໝົດທຸກຄົນໃນສັງຄົມ. CONTINUITY OF LEARNING - support remote learning taking into account equity and inclusivity

III. ການຕິດຕາມກວດກາ, ການລາຍງານ ແລະ ການປະສານງານ (Monitoring, Reporting, Coordinated response)

# ຜົນໄດ້ຮັບທີ 1: ຄວາມຄືບໜ້າ ແລະ ໝາກຜົນສຳເລັດ (OUTCOME 1: KEY PROGRESS, ACHIEVEMENTS)

- ສຳເລັດການໂອນເງິນບໍລິຫານໂຮງຮຽນ (SBG) ໃຫ້ແກ່ໂຮງຮຽນອະນຸບານ, ຫ້ອງກຽມປະຖົມ ແລະ ຊັ້ນປະຖົມໃນທົ່ວປະເທດໃນທ້າຍປີ 2020 ເພື່ອຊື້ອຸປະກອນສຸຂະອານາໄມໃຫ້ໂຮງຮຽນ ເຊັ່ນ: ສະບູ, ຜ້າປິດປາກ-ປິດດັງ ແລະ ອຸປະກອນຮັກສາສຸຂະອະນາໄມ ລວມທັງໝົດ 11,450 ແຫ່ງ ເຊິ່ງກວມເອົານັກຮຽນຈຳນວນ 924,365 ຄົນ; ສ່ວນງົບປະມານທີ່ເຫຼືອ ແມ່ນນຳໃຊ້ຊື້ເຄື່ອງສຸຂະອະນາໄມເພີ່ມເຕີມ ເຊັ່ນ: ເຄື່ອງວັດແທກອຸນຫະພູມ, ເຈວລ້າງມື ສຳລັບໂຮງຮຽນໃນສົກຮຽນ 2021-22 (ງົບປະມານໃຊ້ຈ່າຍທັງໝົດແມ່ນ : 1,443,291 ໂດລາ) .
- SBG transferred to all kindergartens, pre-primary and primary schools across the country at the end of 2020 for hygiene kits, e.g.: soaps, face masks, cleaning materials reaching 11,450 schools & 924,365 children; Balance used for additional supplies, thermometers, hand sanitizers for schools for SY2021-22 (total expenditure: $1,443,291)

# ຜົນໄດ້ຮັບທີ 1: ຄວາມຄືບໜ້າ ແລະ ໝາກຜົນສຳເລັດ (OUTCOME 1: KEY PROGRESS, ACHIEVEMENTS)

- ສຳເລັດໃນການຜະລິດຮາງລ້າງມື ຈຳນວນ 1,180 ຊຸດ ແລະ ພວມດຳເນີນການຈັດສົ່ງໃຫ້ແກ່ໂຮງຮຽນອະນຸບານ ຈຳນວນ 280 ແຫ່ງ ( ໂຮງຮຽນລະ 1 ຊຸດ) ແລະ ໂຮງຮຽນປະຖົມສຶກສາ ຈຳນວນ 300 ແຫ່ງ ( ໂຮງຮຽນລະ 3 ຊຸດ) ລວມໂຮງຮຽນທັງໝົດ 580 ແຫ່ງ ໃນສົກປີ 2021-22. ງົບປະມານໃຊ້ຈ່າຍສຳລັບການຜະລິດຮາງລ້າງມື ແມ່ນ 134,584 ໂດລາ ເຊິ່ງຍັງບໍ່ໄດ້ລວມຄ່າຂົນສົ່ງໄປໃຫ້ໂຮງຮຽນ; ປະຈຸບັນພວມວາງແຜນໃນການຈັດຝຶກອົບຮົມວຽກງານສຸຂະນາໄມ ໃຫ້ແກ່ໂຮງຮຽນ ຈຳນວນ 750 ແຫ່ງ ໃນສົກຮຽນ 2020-21 ໃນເວລາໄດ້ເປີດຮຽນຄືນ.
- 1,180 group handwashing tables produced and delivery ongoing for 280 kindergartens (1 set/KG) and 300 primary schools (3 sets/school) reaching 580 schools for SY2021-22. Total expenditure 134,584 USD excluding delivery costs; Hygiene training for 750 schools planned for SY2020-21 when schools re-open

# ຜົນໄດ້ຮັບທີ 1: ຄວາມຄືບໜ້າ ແລະ ໝາກຜົນສຳເລັດ (OUTCOME 1: KEY PROGRESS, ACHIEVEMENTS)

- ສຳເລັດການສຳຫຼວດເກັບກຳຂໍ້ມູນທາງດ້ານວິຊາການ ກ່ຽວກັບລະບົບນ້ຳໃນໂຮງຮຽນ ເຊິ່ງກິດຈະກຳນີ້ ແມ່ນປະຕິບັດຊັກຊ້າ ຍ້ອນມີການປິດເມືອງ ເນື່ອງຈາກລະບາດຂອງພະຍາດ ໂຄວິດ-19 ( ງົບປະມານທີ່ໃຊ້ຈ່າຍແມ່ນມີຈຳນວນ 19,086.47 ໂດລາ) . ປະຈຸບັນແມ່ນສຳເລັດການປະມູນເພື່ອຄັດເລືອກເອົາບໍລິສັດ ເພື່ອສະໜອງລະບົບນ້ຳໃຫ້ແກ່ໂຮງຮຽນ ຈຳນວນ 227 ແຫ່ງ. ການກໍ່ສ້າງລະບົບນ້ຳໃນໂຮງຮຽນ ຈະເລີ່ມໃນເດືອນພະຈິກ ປີ 2021.
- Technical survey/assessment on water system in schools completed, initial delays due to lockdowns (expenditure: $19,086.47 ). Bidding for companies to provide the water system in target 227 schools completed. Construction of water systems in target schools will start in November 2021.

# ຜົນໄດ້ຮັບທີ 2: ຄວາມຄືບໜ້າ ແລະ ໝາກຜົນສຳເລັດ (OUTCOME 2: KEY PROGRESS, ACHIEVEMENTS)

- ສຳລັບສົກຮຽນ 2020-21, ສຳເລັດການຈັດພິມປຶ້ມແບບຮຽນ, ຄູ່ມືຄູ ແລະ ອຸປະກອນການຮຽນ ເພື່ອຈັດສົ່ງໃຫ້ໂຮງຮຽນໃນທົ່ວປະເທດ ເຊິ່ງ ກວມເອົານັກຮຽນ ຈຳນວນ 756,093 ຄົນ. ງົບປະມານໃຊ້ຈ່າຍໃນການພິມແມ່ນ 19.456.450.000 ກີບ ແລະ ງົບປະມານຄ່າຂົນສົ່ງປຶ້ມແມ່ນ 585.047.833 ກີບ ລວມງົບປະມານທັງໝົດແມ່ນ 20,041,497,833 ກີບ)
- For SY2020-21, completed printing of textbooks, teachers' guide and learning materials and delivered to schools across the country reaching a total of **756,093 students**. Printing expenditure: 19.456.450.000 kip; textbook delivery expenditure: 585.047.833 kip. Total: 20,041,497,833 kip).
- ງົບປະມານທີ່ເຫຼືອ ແມ່ນໃຊ້ເຂົ້າໃນການຈັດພິມປຶ້ມແບບຮຽນໃໝ່ ສຳລັບຊັ້ນ ປ.3 ແລະ ປ.4 (ຄະນິດສາດ), ຫຼັກສູດຫ້ອງກຽມ ສຳລັບສົກຮຽນ 2021-22 (ງົບປະມານໃຊ້ຈ່າຍແມ່ນ 2.714.939.410 ກີບ); ນອກນັ້ນຍັງຈະໃຊ້ງົບປະມານເພື່ອຈັດພິມຫຼັກສູດພື້ນຖານ ອີງຕາມແຈ້ງການຂອງກະຊວງສຶກສາທິການ ແລະ ກິລາ
- Balance used for printing of new textbooks for G3 and G4 math, pre-primary curriculum for SY2021-22 (Expenditure: 2.714.939.410 kip); Printing of new compressed curriculum materials based on new MoES directive

# ຜົນໄດ້ຮັບທີ 2: ຄວາມຄືບໜ້າ ແລະ ໝາກຜົນສຳເລັດ(OUTCOME 2: KEY PROGRESS, ACHIEVEMENTS)

- ສຳເລັດການຈັດພິມປື້ມແບບຮຽນໜັງສືນູນຂອງ ຊັ້ນ ປ.1 ແລະ ປ.2 (ຫຼັກສູດ ໃໝ່ (ງົບປະມານໃຊ້ຈ່າຍພິມປື້ມ: 349.200.000 ກີບ).
- Completed printing in Braille of G1 and G2 ( new curriculum) (Expenditure: 349.200.000 kip).



# ຜົນໄດ້ຮັບທີ 2: ຄວາມຄືບໜ້າ ແລະ ໝາກຜົນສຳເລັດ (OUTCOME 2: KEY PROGRESS, ACHIEVEMENTS)

- ໄດ້ພັດທະນາ ແລະ ສຳເລັດການເປີດໂຕນຳໃຊ້ຖານຂໍ້ມູນການຮຽນ-ການສອນ ຄັງປັນຍາລາວ ຂອງກະຊວງສຶກສາທິການ ແລະ ກິລາ ມາຮອດປັດຈຸບັນຜູ້ເຂົ້າຊົມໃຊ້ລະບົບຫຼາຍກ່ວາ 40,000 ຄົນ ( ຜູ້ນຳໃຊ້ລະບົບ ອາດມີລູກຫຼານ 2-3 ຄົນ ຕໍ່ ຜູ້ນຳໃຊ້ 1 ຄົນ); ໄດ້ມີການຂະຫຍາຍການຝຶກອົບຮົມໃນການນຳໃຊ້ລະບົບ ຄັງປັນຍາລາວ ໃຫ້ແກ່ຄູອາຈານ ແລະ ຜູ້ອຳນວຍການໂຮງຮຽນ. ໄດ້ມີການປະກອບສ່ວນຈາກຄູ່ຮ່ວມພັດທະນາໃນການເອົາເນື້ອໃນເຂົ້າໃນ ຄັງປັນຍາລາວ.
- MoES digital teaching-learning platform Khang Panya Lao set-up and launched. More than 40,000 registered users to date (1 user can have 2-3 children); Trainings for teachers and principals rolled out. Key Development Partners supporting contents and reach.



# ຜົນໄດ້ຮັບທີ 2: ຄວາມຄືບໜ້າ ແລະ ໝາກຜົນສຳເລັດ (OUTCOME 2: KEY PROGRESS, ACHIEVEMENTS)

- ສຳເລັດການຈັດຝຶກອົບຮົມສຳລັບຄູຝຶກ ກ່ຽວກັບວຽກງານຈິດຕະສັງຄົມ ໃຫ້ແກ່ ພະແນກ/ຫ້ອງການສຶກສາ ແລະ ກິລາ ແຂວງ/ເມືອງ, ອຳນວຍການໂຮງຮຽນ ແລະ ຄູອາຈານ ຈຳນວນໜຶ່ງໃນ 7 ແຂວງເປົ້າໝາຍ ເຊິ່ງຄູຝຶກຫຼັກ ແມ່ນນຳໂດຍ ກະຊວງສຶກສາທິການ ແລະ ກິລາ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ມະຫາວິທະຍາໄລແຫ່ງຊາດ, ກະຊວງສາທາລະນະສຸກ, ແລະ ພາກສ່ວນທີ່ກ່ຽວຂ້ອງ. ຜູ້ທີ່ໄດ້ຮັບການຝຶກ ຈະນຳຄວາມຮູ້ ເພື່ອໄປຝຶກຕໍ່ໃຫ້ແກ່ກຸ່ມໂຮງຮຽນສະມາຊິກຂອງຕົນ ໃນທ້າຍເດືອນ ຕຸລາ 2021 (ງົບປະມານໃນການຝຶກອົບຮົມຄູຝຶກ ແມ່ນ 70.890.000 ກີບ.)
- ToT training on Psychosocial First Aid (PFA) for DESB/PESS, school directors and teachers in 7 provinces  completed. Core trainers were led by MOES, MoLSW, National University of Laos, MoH and concerned sectors. The trained trainers will further train their respective school cluster members by the end of October 2021 ( ToT training budget: 70.890.000 kip).

# ຜົນໄດ້ຮັບທີ 2: ຄວາມຄືບໜ້າ ແລະ ໝາກຜົນສຳເລັດ (OUTCOME 2: KEY PROGRESS, ACHIEVEMENTS)

- ໄດ້ມີການພັດທະນາ ວີດີໂອ ທີ່ມີເນື້ອໃນທາງດ້ານການສຶກສາ ສຳລັບການອອກອາກາດທາງໂທລະພາບ ແລະ ຈຳນວນໜຶ່ງ ຊຶ່ງພວມດຳເນີນການພັດທະນາເຊັ່ນ: ລາຍການໂທລະພາບ ສຳລັບເດັກກ່ອນໄວຮຽນ ເຮືອນຂອງຂ້ອຍ Season 2 , ວີດີໂອສຳລັບນັກຮຽນຫ້ອງກຽມປະຖົມ, ປະຖົມ ແລະ ມັດທະຍົມ ເພື່ອອອກອາກາດທາງໂທລະພາບສຶກສາ ແລະ ກິລາ (ESTV) ພ້ອມທັງທາງສື່ອອນລາຍອື່ນໆ ລວມທັງຜ່ານຄັງປັນຍາລາວ. ວີດີໂອທັງໝົດ ແມ່ນຈະມີພາສາມືຢູ່ນຳ. ( ງົບປະມານໃຊ້ຈ່າຍແມ່ນ 103,158 ໂດລາ).
- ລາຍການໂທລະພາບ ເຮືອນຂອງຂ້ອຍ ຈະເປີດໂຕໃນທ້າຍເດືອນ ຕຸລານີ້.
- Educational content for TV developed and more under development: My House ECD TV Series Season 2, other videos for pre-primary, primary and secondary students to be shared on the MoES Education-Sports TV Channel (ESTV) and online, including Khang Panya Lao. All video include sign language (Expenditure to date: $103,158)
- My House TV Series to be launched in late October



# ສິ່ງທ້າທາຍໃນການຈັດຕັ້ງປະຕິບັດກິດຈະກຳ
# ( CHALLENGES OF PROJECT IMPLEMENTATION)

- ເນື່ອງຈາກມີການລະບາດຂອງພະຍາດໂຄວິດ 19 ໃນຫຼາຍແຂວງ ລວມທັງນະຄອນຫຼວງວຽງຈັນ ຈຶ່ງເຮັດໃຫ້ມີຜົນກະທົບສຳລັບການຈັດຕັ້ງປະຕິບັດກິດຈະກຳ ເຊິ່ງໄດ້ຈຳກັດໃນການຈັດກອງປະຊຸມແບບເຊິ່ງໜ້າ ແລະ ການເດີນທາງໄປຕ່າງແຂວງ. ບາງກິດຈະກຳ ແມ່ນຕ້ອງໄດ້ມີການເລື່ອນ ແລະ ບໍ່ສາມາດຈັດຕັ້ງປະຕິບັດໄດ້ຕາມແຜນ ທີ່ວາງໄວ້.
- ງົບປະມານຮອດປັດຈຸບັນ ແມ່ນນຳໃຊ້ປະມານ 62 %  ແລະຄາດວ່າຈະນຳໃຊ້ງົບປະມານ 75 % ໃນທ້າຍປີ 2021
- The COVID-19 outbreak in several provinces, including in Vientiane Capital has had significant impact on activity implementation due to restrictions in face-to-face meetings and travel to provinces. Some activities have been delayed and others not yet implemented.
- Funding: already 62% utilized, expected to reach 75% by end 2021

# ແຜນຈັດຕັ້ງປະຕິບັດກິດຈະກຳໃນຕໍ່ໜ້າ
## ( ACTIVITIES TO BE IMPLEMENTED AND COMPLETED)

- ດຳເນີນການກໍ່ສ້າງສະໜອງລະບົບນ້ຳໃຫ້ແກ່ໂຮງຮຽນ ໃນຈຳນວນ 227 ໂຮງຮຽນ ໃນ 5 ແຂວງເປົ້າໝາຍ
- Construction of water system connections for 227 schools in 5 provinces
- ຈັດຝຶກອົບຮົມວຽກງານສຸຂະອະນາໄມໃນໂຮງຮຽນ ໃນຈຳນວນ 750 ໂຮງຮຽນໃນ 6 ແຂວງເປົ້າໝາຍ.
- WASH training for 750 schools in 6 provinces
- ດຳເນີນການຈັດສົ່ງ ແລະ ຕິດຕັ້ງຮາງລ້າງມື ຈຳນວນ 1,180 ຊຸດ ໃຫ້ແກ່ໂຮງຮຽນ ຈຳນວນ 580 ໂຮງຮຽນໃນ 6 ແຂວງເປົ້າໝາຍ.
- Delivery and installation of 1,180 handwashing tables to 580 schools 6 provinces

# ແຜນຈັດຕັ້ງປະຕິບັດກິດຈະກໍາໃນຕໍ່ໜ້າ
# ( ACTIVITIES TO BE IMPLEMENTED AND COMPLETED)

- ດໍາເນີນການຜະລິດວິດີໂອການສອນຂອງຂັ້ນປະຖົມ ແຕ່ ປ.1 ຫາ ປ.5 ໃນຈໍານວນ 57 ວິດີໂອ ເພື່ອເຜີຍແຜ່ຜ່ານໂທລະພາບສຶກສາ ແລະ ກິລາ ແລະ ຫຼາກຫຼາຍຊ່ອງທາງໃນສື່ອອນລາຍ; ສືບຕໍ່ຜະລິດວິດີໂອກ່ອນໄວຮຽນ ຈໍານວນ 22 ວິດີໂອ ເຊິ່ງ ສໍາເລັດແລ້ວ 15 ວິດີໂອ ເຊິ່ງໄດ້ມີການຢຸດຖ່າຍທໍາຊົ່ວຄາວ ເນື່ອງຈາກມີການປິດເມືອງ ຈາກການລະບາດຂອງພະຍາດໂຄວິດ 19.

Production of 57 primary education videos from G1 to G5 in order to disseminate via ESTV and various media channels; Production of 22 ECE videos started, 15 completed but stopped due to lockdowns

# ແຜນຈັດຕັ້ງປະຕິບັດກິດຈະກໍາໃນຕໍ່ໜ້າ
# ( ACTIVITIES TO BE IMPLEMENTED AND COMPLETED)

- ກອງເລຂາໂຄງການພວມດໍາເນີນການເຈລະຈາ ກັບບໍລິສັດ LaoSat ເພື່ອຈັດຊື້ຊຸດຈານດາວທຽມ ແລະ ໂທລະພາບ ເພື່ອສະໜອງໃຫ້ແກ່ໂຮງຮຽນເປົ້າໝາຍ ໃນຈໍານວນ 300 ໂຮງຮຽນ.
- Project Secretariat finalizing negotiations with LaoSat company to procure Satellite sets and TVs for 300 target schools.
- ອົງການອຸຍນິເຊັບ ພວມດໍາເນີນການຈັດຊື້ອຸປະກອນ IT ເຊັ່ນ: ແທັບເບັດ ( Tablets), ແລັບທອບ(Desktops) ແລະ ໂປຼເຈັດເຕີ (projectors) ເພື່ອສະໜອງໃຫ້ໂຮງຮຽນເປົ້າໝາຍ ຈໍານວນ 600 ໂຮງຮຽນ ເພື່ອນໍາໃຊ້ເຂົ້າໃນຖານການຮຽນ-ການສອນຄັງປັນຍາລາວ.
- UNICEF procuring IT equipment (tablets, laptops and projectors) for 600 schools to use for Khang Pan Ya Lao platform access

# ແຜນຈັດຕັ້ງປະຕິບັດກິດຈະກຳໃນຕໍ່ໜ້າ
# ( ACTIVITIES TO BE IMPLEMENTED AND COMPLETED)

- ຈັດກອງປະຊຸມຮັບຮອງປຶ້ມຄູ່ມືການຮຽນ-ການສອນແບບອອນລາຍ ແລະ ອອບລາຍ ແລະ ການຮຽນທາງໄກ; ຈັດຝຶກອົບຮົມໃຫ້ແກ່ ຜູ້ອຳນວຍການໂຮງຮຽນ, ຄູນິເທດ ແລະ ຄູອາຈານ ລວມທັງການນຳໃຊ້ຄັງປັນຍາຂອງກະຊວງ ສສກ
- Validation workshop remote learning guidelines; trainings for school directors, teachers and PAs; including on MoES Khang Panya Lao
- ສືບຕໍ່ຝຶກອົບຮົມການສະໜັບສະໜູນຈິດຕະສັງຄົມ ໃຫ້ແກ່ໂຮງຮຽນ ໃນແຂວງທີ່ຍັງເຫຼືອ (ອາດເປັນໃນຮູບແບບອອນລາຍ ແລະ ເຊິ່ງໜ້າ) ໃນທ້າຍເດືອນຕຸລາ 2021
- Psychosocial First Aid trainings for schools in remaining provinces (face-to-face or online) from end of October 2021
- ຈັດຝຶກອົບຮົມກ່ຽວກັບວຽກງານການສະໜັບສະໜູນການບຳລຸງນັກຮຽນອ່ອນ ໃຫ້ແກ່ 6 ເມືອງເປົ້າໝາຍ.
- Rollout of catch-up/remedial support in 6 target districts

# ຂໍ້ສະເໜີ (RECOMMENDATION)

- ໂຄງການຕອບໂຕ້ພະຍາດໂຄວິດ-19 ແມ່ນມີກຳນົດສິ້ນສຸດໃນວັນທີ 31 ທັນວາ 2021 ນີ້. ເນື່ອງຈາກຜົນກະທົບຂອງການແຜ່ລະບາດຂອງພະຍາດໂຄວິດ-19 ເຮັດໃຫ້ຫຼາຍກິດຈະກຳແມ່ນມີຄວາມຊັກຊ້າ ໃນການຈັດຕັ້ງປະຕິບັດກິດຈະກຳ, ຫ້ອງການກະຊວງສຶກສາທິການ ແລະ ກິລາ ໃນຖານະເປັນຜູ້ປະສານງານໃນການຈັດຕັ້ງປະຕິບັດໂຄງການ, ຂໍຮຽນສະເໜີມາຍັງ ESWG ເພື່ອຂໍຕໍ່ໄລຍະເວລາຂອງໂຄງການໄປອີກ 6 ເດືອນ ( ໂດຍບໍ່ມີງົບປະມານເພີ່ມເຕີມ) ເພື່ອສືບຕໍ່ໃນການຈັດຕັ້ງປະຕິບັດກິດຈະກຳໂຄງການທີ່ຄ້າງ ໃຫ້ສຳເລັດຕາມແຜນການທີ່ວາງໄວ້ ເຊິ່ງຈະບໍ່ໄດ້ມີການປ່ຽນແປງບັນດາກິດຈະກຳ ແລະ ງົບປະມານໃດໆ ແລະ ໄດ້ຮັບການເຫັນດີໃນການຕໍ່ໄລຍະຂອງໂຄງການຈາກ ຄະນະນຳ ຂອງກະຊວງສຶກສາທິການ ແລະ ກິລາແລ້ວ.
- ພາຍຫຼັງໄດ້ຮັບການອະນຸມັດເຫັນດີຈາກ ESWG, ຈະໄດ້ມີການຍື່ນໜັງສືສະເໜີຕໍ່ກອງເລຂາ GPE ເພື່ອອະນຸມັດໃນຂັ້ນຕໍ່ໄປ.
- While the project is until 31 Dec. 2021, due to the impact of the COVID 19 outbreak several activities have been delayed, the MoES Cabinet Office leading the project management would like to propose to the ESWG to extend the project for another 6 months (no cost extension) in order to continue and complete activities as per the work plan. No changes in the activities and budget. MoES Senior Management has endorsed this request for extension.
- After approval from ESWG, request will be submitted to the GPE Secretariat for endorsement.

# ຂໍຂອບໃຈ (Thank you)







